**ຂໍ້ຕົກລົງ ວ່າດ້ວຍ ການຮ່ວມມື**
**ລະຫວ່າງ**
**ສະຫະພັນແມ່ຍິງ ແຂວງໄຊສົມບູນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ແລະ**
**ສະຫະພັນແມ່ຍິງ ແຂວງບັ໋ກຢາງ, ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ**
**ໄລຍະ 2022-2025**

ເພື່ອປະຕິບັດຕາມ ຂໍ້ຕົກລົງວ່າດ້ວຍການຮ່ວມມື ລະຫວ່າງ ການນຳແຂວງໄຊສົມບູນ, ສປປ ລາວ ແລະ ການນຳແຂວງບັ໋ກຢາງ, ສສ ຫວຽດນາມ ທີ່ໄດ້ລົງນາມ ໃນວັນທີ 09 ສິງຫາ 2021 ວ່າດ້ວຍ ການສ້າງສາຍພົວພັນຮ່ວມມື ມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ, ກໍຄືສອງ ອົງຄະນະພັກ, ອົງການປົກຄອງ ແລະ ປະຊາຊົນສອງແຂວງ ບັ໋ກຢາງ ແລະ ໄຊສົມບູນ. ແນ່ໃສ່ຊຸກຍູ້ສາຍພົວພັນມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານ ລະຫວ່າງ ສະຫະພັນແມ່ຍິງແຂວງໄຊສົມບູນ ແລະ ສະຫະພັນແມ່ຍິງແຂວງບັ໋ກຢາງ ໃຫ້ນັບມື້ນັບກ້າວເຂົ້າສູ່ລວງເລິກ. ສະຫະພັນແມ່ຍິງແຂວງໄຊສົມບູນ ແລະ ສະຫະພັນແມ່ຍິງແຂວງບັ໋ກຢາງ *(ຕໍ່ໄປນີ້ເອີ້ນວ່າ ສອງຝ່າຍ )* ໄດ້ເອກະພາບລົງນາມ ຂໍ້ຕົກລົງວ່າດ້ວຍການຮ່ວມມື ໄລຍະ 2022-2025 ໂດຍມີເນື້ອໃນລະອຽດດັ່ງນີ້:

## I. ເນື້ອໃນການຮ່ວມມື.

**1. ສອງຝ່າຍສືບຕໍ່ເພີ່ມທະວີໂຄສະນາເຜີຍແຜ່, ສຶກສາອົບຮົມ** ຍົກສູງຄວາມເຂົ້າໃຈຂອງແມ່ຍິງສອງແຂວງ ກ່ຽວກັບ ສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງປະເທດ. ໂຄສະນາເຜີຍແຜ່ ກ່ຽວກັບ ຮູບພາບທີ່ຕັ້ງພູມສັນຖານ, ຄົນ, ວັດທະນະທຳ, ທ່າແຮງ ແລະ ຜົນສຳເລັດການພັດທະນາເສດຖະກິດ-ສັງຄົມ ຂອງກັນ ແລະ ກັນ, ການພົວພັນຮ່ວມມື ລະຫວ່າງ ສອງແຂວງ; ແລກປ່ຽນຂໍ້ມູນຂ່າວສານ ແລະ ປະສົບການ ກ່ຽວກັບ ບັນດາຜົນສຳເລັດທີ່ສອງແຂວງຍາດມາໄດ້ ໃນພາລະກິດພັດທະນາປະເທດຊາດ, ປະຕິບັດໜ້າທີ່ ເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ຄວາມສະເໝີພາບຍິງ-ຊາຍ ຂອງສອງແຂວງ.

**2. ຍົກສູງຄວາມຮູ້ດ້ານການປົກປ້ອງແມ່ຍິງ ແລະ ເດັກນ້ອຍ:** ສອງຝ່າຍ ເພີ່ມທະວີການຮ່ວມມື, ແລກປ່ຽນບົດຮຽນ, ຄວາມຮູ້, ວິຊາສະເພາະ, ຂໍ້ມູນຂ່າວສານ ເພື່ອປະກອບສ່ວນເຂົ້າໃນການເບິ່ງແຍງສຸຂະພາບໃຫ້ແກ່ແມ່ຍິງ, ເດັກນ້ອຍ; ສະກັດກັ້ນ, ຕ້ານການຄ້າມະນຸດ (ແມ່ຍິງ ແລະ ເດັກນ້ອຍ); ສະກັດກັ້ນ, ຕ້ານບັນດາປະກົດການຫຍໍ້ທໍ້ໃນສັງຄົມ; ການປ້ອງກັນພະຍາດຕ່າງໆ ... ຊ່ວຍເຫຼືອ, ແນະນຳການນຳໃຊ້ປະສົບການເຂົ້າໃນການຄຸ້ມຄອງຄອບຄົວ, ລ້ຽງດູເດັກໃນສະພາບການເຊື່ອມໂຍງ, ຍົກສູງຄວາມຮັບຮູ້ຂອງແມ່ຍິງ ແລະ ຄອບຄົວ ກ່ຽວກັບ ຜົນກະທົບທາງລົບ ຂອງການເຊື່ອມໂຍງສາກົນ, ສ້າງຄອບຄົວ 5 ບໍ່, 3 ສະອາດ.

**3. ດ້ານການປຸກລະດົມ ແລະ ຊ່ວຍເຫຼືອແມ່ຍິງໃນການພັດທະນາເສດຖະກິດ:** ສອງຝ່າຍແລກປ່ຽນ, ແບ່ງປັນປະສົບການໃນການສ້າງແມ່ຍິງຕົວແບບ ເພື່ອເຂົ້າຮ່ວມການພັດທະນາເສດຖະກິດລວມໝູ່, ເຊື່ອມຕໍ່, ໂຄສະນາເຜີຍແຜ່, ແນະນຳ, ສະໜັບສະໜູນບໍລິໂພກບັນດາຜະລິດຕະພັນກະສິກຳທ່າແຮງ, ເອກະລັກ ຂອງທ້ອງຖິ່ນ; ປຸກລະດົມແມ່ຍິງ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໃນການຜະລິດ, ການດຳລົງຊີວິດ, ຍາມຫຍຸ້ງຍາກລຳບາກ, ຊ່ວຍເຫຼືອແມ່ຍິງທີ່ທຸກຍາກມີທີ່ຢູ່ອາໄສ, ສ້າງຮູບແບບການດຳລົງຊີວິດ, ເປັນບ້ານທີ່ອົບອຸ່ນມີຄວາມຮັກແພງ, ມີສຸຂະອານາໄມ ເພື່ອປະກອບສ່ວນລຶບລ້າງຄວາມທຸກຍາກ, ປົກປັກຮັກສາສິ່ງແວດລ້ອມ ...

**4. ດ້ານການຈັດຕັ້ງຂອງສະຫະພັນແມ່ຍິງ:** ສອງຝ່າຍແລກປ່ຽນ, ແບ່ງປັນປະສົບການ ໃນການເສີມສ້າງ, ຍົກສູງຄຸນນະພາບ, ຜົນສຳເລັດໃນການເຄື່ອນໄຫວວຽກງານຂອງສະຫະພັນແມ່ຍິງ, ຍົກສູງຄຸນະພາບບັນດາຮູບການດຶງດູດສະມາຊິກ; ຍົກສູງລະດັບວິຊາສະເພາະ ແລະ ທິດສະດີການເມືອງ, ເປັນເສນາທິການໃນການສະ ເໜີຂໍ້ນະໂຍບາຍສະເພາະໃຫ້ແກ່ພະນັກງານເພດຍິງ.

**5. ຈັດຕັ້ງການຢ້ຽມຢາມ, ເຮັດວຽກ:** ພາຍໃຕ້ກົນໄກຜັດປ່ຽນກັນເປັນເຈົ້າພາບ 2ປີ/ຄັ້ງ, ສອງຝ່າຍ ແຕ່ງຕັ້ງຄະນະຜູ້ແທນຢ້ຽມຢາມ, ແລກປ່ຽນ, ແບ່ງປັນປະສົບການ ແລະ ສະຫຼຸບສັງລວມການປະຕິບັດຂໍ້ຕົກລົງວ່າດ້ວຍການ

ຮ່ວມມື *(ແຜນການ, ຈ☐ນວນ, ພາກສ່ວນ, ເນື້ອໃນ ແລະ ວັນເວລາ ແມ່ນສອງຝ່າຍຈະພ້ອມກັນປຶກສາຫາລື ແລະ ເປັນເອກະພາບກັນຢ່າງລະອຽດ).*

## II. ການຈັດຕັ້ງປະຕິບັດ

**1.** ສະຫະພັນແມ່ຍິງສອງແຂວງ ເອກະພາບມອບໃຫ້ ຂະແໜງບໍລິຫານ, ຈັດຕັ້ງ ແລະ ກວດກາ ສະຫະພັນແມ່ຍິງແຂວງໄຊສົມບູນ ແລະ ຫ້ອງການສະຫະພັນແມ່ຍິງແຂວງບັ໋ກຢາງ ເປັນໃຈກາງປະສານງານ, ເປັນເຈົ້າການ ແລະ ເປັນເສນາທິການ ຜັນຂະຫຍາຍບັນດາເນື້ອໃນຂໍ້ຕົກລົງວ່າດ້ວຍການຮ່ວມມື. ແຕ່ລະປີ, ຂະແໜງປະສານງານຂອງສອງຝ່າຍ ສະຫຼຸບສັງລວມ, ລາຍງານການຈັດຕັ້ງປະຕິບັດຂໍ້ຕົກລົງວ່າດ້ວຍການຮ່ວມມື ແລະ ສະເໜີເນື້ອໃນການຮ່ວມມືລະອຽດໃນປີຕໍ່ໄປ ໃຫ້ແກ່ການນຳສອງແຂວງ ເພື່ອເປັນເອກະພາບໃນການຈັດຕັ້ງປະຕິບັດ.

**ຂໍ້ມູນຕິດຕໍ່ພົວພັນ ຂອງຂະແໜງປະສານງານ ສອງແຂວງ:**

- ຂໍ້ມູນຕິດຕໍ່ພົວພັນຂອງ ຂະແໜງບໍລິຫານ,ຈັດຕັ້ງ ແລະ ກວດກາ ສະຫະພັນແມ່ຍິງແຂວງໄຊສົມບູນ: ສະຖານທີ່: ບ້ານພູຫົວຊ້າງ, ເມືອງອະນຸວົງ, ແຂວງໄຊສົມບູນ.

ໂທລະສັບ: 020 5927 1671

ອີເມວ: sitthvolada1@hotmail.com

- ຂໍ້ມູນຕິດຕໍ່ພົວພັນ ຂອງຫ້ອງການສະຫະພັນແມ່ຍິງແຂວງບັ໋ກຢາງ:

ສະຖານທີ່: ເລກທີ 72, ຖະໜົນ ຮຸ່ງເວືອງ, ນະຄອນບັ໋ກຢາງ, ແຂວງບັ໋ກຢາງ, ສສ ຫວຽດນາມ.

ໂທລະສັບ: 020 4385 4702

ອີເມວ: **Phunubacgiang@gmail.com**

**2.** ບັນດາຂະແໜງ, ໜ່ວຍງານ ທີ່ຂຶ້ນກັບ ສະຫະພັນແມ່ຍິງສອງແຂວງ ອີງຕາມຂໍ້ຕົກລົງວ່າດ້ວຍການຮ່ວມມື, ພາລະບົດບາດ, ໜ້າທີ່ ທີ່ໄດ້ຮັບມອບໝາຍ, ຈັດຕັ້ງບັນດາການເຄື່ອນໄຫວໃຫ້ແທດເໝາະກັບສະພາບຕົວຈິງ, ຮັບປະກັນປະສິດທິຜົນ.

**3.** ຂໍ້ຕົກລົງວ່າດ້ວຍການຮ່ວມມືສະບັບນີ້ ບໍ່ໄດ້ມີການຜູກມັດໃດໆທາງດ້ານກົດໝາຍ ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ; ອາດຈະມີການປັບປຸງ, ຍົກເລີກ ໃນກໍລະນີຝ່າຍໃດຝ່າຍໜຶ່ງ ມີການສະເໜີເປັນລາຍລັກອັກສອນ ແລະ ໄດ້ຮັບການເຫັນດີຈາກອີກຝ່າຍ. ຂໍ້ຕົກລົງວ່າດ້ວຍການຮ່ວມມືສະບັບນີ້ ໄດ້ສ້າງຂຶ້ນເປັນ ພາສາລາວ ສອງ (02) ສະບັບ ແລະ ພາສາຫວຽດ ສອງ (02) ສະບັບ ມີຄຸນຄ່າເທົ່າກັນ, ແຕ່ລະຝ່າຍ ເກັບຮັກສາໄວ້ ພາສາລາວ 01 ສະບັບ ແລະ ພາສາຫວຽດ 01 ສະບັບ.

ຂໍ້ຕົກລົງ ວ່າດ້ວຍ ການຮ່ວມມືສະບັບນີ້ ໄດ້ຮັບການລົງນາມ ທີ່ແຂວງໄຊສົມບູນ, ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 28 ພະຈິກ 2022.

| | |
|---|---|
| **ປະທານສະຫະພັນແມ່ຍິງແຂວງໄຊສົມບູນ** | **ປະທານສະຫະພັນແມ່ຍິງແຂວງບັ໋ກຢາງ** |
| **ຄາສີ ສິດທິວໍລະດາ** | **ວູ້ຍ ທິ ຕວ່ຽນ** |